Education & Communities
Public Schools NSW

**HEAD LICE TREATMENT OPTIONS**
**INFORMATION FOR PARENTS AND CARERS**
**LAO**

# ທາງເລືອກວິທີຮັກສາເຫົາ
## ຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ປົກຄອງ

## ມັນມີວິທີຮັກສາເຫົາໃຫ້ເລືອກຢູ່ສອງທາງ

1. ການກຳຈັດດ້ວຍເຄື່ອງມື (ກຳຈັດດ້ວຍ ຫວີສຳລັບຫວີເຫົາ)
2. ການກຳຈັດດ້ວຍນ້ຳຢາເຄມີ

### ການກຳຈັດດ້ວຍເຄື່ອງມື

ການກຳຈັດດ້ວຍເຄື່ອງມືແມ່ນການໃຊ້ນ້ຳຢານວດຜົມແບບທຳມະດາໃສ່ຜົມທີ່ແຫ້ງ. ຫຼັງຈາກທາໃສ່ທົ່ວທຸກເສັ້ນຜົມແລ້ວ ໃຫ້ໃຊ້ຫວີແບບທຳມະດາຫວີຜົມໃຫ້ລຽບແລະແບ່ງຜົມໄວ້ເປັນສ່ວນໆ. ຫຼັງຈາກນັ້ນ ໃຫ້ໃຊ້ຫວີເຫຼັກແຂ້ວຖີ່ ມາ ຫວີຜົມທີ່ແບ່ງໄວ້ເປັນສ່ວນໆນັ້ນໃຫ້ທົ່ວ. ນ້ຳຢານວດຜົມຈະບໍ່ຂ້າເຫົາ ແຕ່ມັນຈະເຮັດໃຫ້ໂຕເຫົາຕິງບໍ່ໄດ້ປະມານ 20ນາທີ ເຮັດໃຫ້ການເອົາມັນອອກນັ້ນງ່າຍຂຶ້ນ. ຫວີຖີ່ ຈະເອົາໄຂ່ເຫົາ ແລະ ໂຕເຫົາທີ່ບໍ່ຕິງນັ້ນອອກ. ເຊັດຫວີດ້ວຍເຈ້ຍທິຊຊູສີຂາວ ແລະ ກວດເບິ່ງໄຂ່ເຫົາແລະໂຕເຫົາ. ສືບຕໍ່ການຫວີຈົນກວ່າ ຈະບໍ່ປະກົດເຫັນຢູ່ໃນເຈ້ຍທິຊຊູນັ້ນ. ຄວນນຳໃຊ້ວິທີນີ້ທຸກໆສອງມື້ຈົນກວ່າຈະບໍ່ມີເຫົາເຫຼືອໄວ້ອີກ (ຕາມປົກກະຕິປະມານ 7 ຫາ10 ມື້).

ວິທີນີ້ເປັນວິທີທີ່ມັກໃຊ້ໃນການກຳຈັດເຫົາເພາະວ່າມັນມີປະສິດທິຜົນ ບໍ່ມີສານຂ້າແມງໄມ້ໃນໂຕເຫົາ ແລະ ມີຄວາມສ່ຽງຕ່ຳໃນການເຮັດໃຫ້ພັງທົ່ວຄັນ.

ນອກຈາກນັ້ນແລ້ວ ວິທີການກຳຈັດດ້ວຍເຄື່ອງມືນີ້ຍັງຊ່ວຍໃນການຄວບຄຸມເບິ່ງເຫົາກ່ອນທີ່ ມັນຈະເກີດຂຶ້ນຢູ່ໃນຫົວ. ເກັບຫວີຖີ່ສຳລັບເຫົາໄວ້ຢູ່ໃນຫ້ອງອາບນ້ຳ ແລະ ທຸກໆຄັ້ງທີ່ຄອບຄົວຂອງທ່ານສະຜົມ ຈົ່ງຫວີຜົມໃຫ້ທົ່ວ ດ້ວຍຫວີຖີ່ນີ້. ຈົ່ງໃຫ້ແນ່ໃຈວ່າໂຕເຫົາຖືກຈັບ ໄດ້ກ່ອນທີ່ມັນຈະອອກໄຂ່.

ຖ້າລູກທ່ານໃຫຍ່ພໍທີ່ຈະສາມາດສະຜົມດ້ວຍໂຕເອງກໍຈົ່ງຊຸກຍູ້ໃຫ້ພວກເຂົາໃຊ້ຫວີຖີ່ນັ້ນດ້ວຍໂຕເຂົາເອງ. ຫຼື ເກັບມ້ຽນຫວີໄດ້ຢູ່ບ່ອນທີ່ທ່ານສະຜົມໃຫ້ລູກທ່ານ ແລະ ໃຊ້ມັນທຸກໆຄັ້ງທີ່ທ່ານສະຜົມໃຫ້ພວກເຂົາ.

### ການກຳຈັດດ້ວຍນ້ຳຢາເຄມີ

ຖ້າທ່ານເລືອກໃຊ້ວິທີກຳຈັດດ້ວຍນ້ຳຢາເຄມີ ຈົ່ງຈື່ໃນການເຮັດຕາມຄຳແນະນຳຢ່າງລະມັດລະວັງ. ຈົ່ງຢ່າພະຍາຍາມໃຊ້ວິທີກຳຈັດດ້ວຍນ້ຳຢາເຄມີອີກເປັນຄັ້ງທີສອງຖ້າວ່າມັນບໍ່ໄດ້ຜົນ. ຈົ່ງປ່ຽນໄປໃຊ້ວິທີທີ່ ໃຊ້ນ້ຳຢາເຄມີອື່ນແທນ ຫຼື ໃຊ້ວິທີທີ່ກຳຈັດດ້ວຍຫວີແລະນ້ຳຢານວດຜົມ. ທ່ານຕ້ອງໃຊ້ວິທີນີ້ຊ້ຳອີກພາຍໃນເວລາ 7ມື້ ເພື່ອຂ້າໄຂ່ເຫົາທີ່ອອກໃໝ່. ນອກຈາກນີ້ທ່ານຍັງຕ້ອງໃຊ້ຫວີຖີ່ເພື່ອໃຫ້ແນ່ໃຈວ່າ ວິທີກຳຈັດນັ້ນໄດ້ຜົນ. ຖ້າທ່ານພົບໂຕເຫົາຕາຍ ສະແດງວ່າຜລິດຕະພັນນັ້ນໄດ້ຜົນ. ຖ້າທ່ານພົບຍັງໂຕເຫົາຍັງເປັນໆຢູ່ ການກຳຈັດແບບນີ້ບໍ່ໄດ້ຜົນ.

ໃນເວລາທີ່ລູກທ່ານບໍ່ມີໄຂ່ເຫົາ ແລະ ໂຕເຫົາແລ້ວ ຈົ່ງຈື່ໄວ້ວ່າໃຫ້ກວດເບິ່ງໃຫ້ສມ່ຳສເມີ ດ້ວຍຫວີຖີ່ ແລະ ນ້ຳຢານວດຜົມ. ການພົບແລະ ການຮັກສາແຕ່ເບື້ອງຕົ້ນຈະປ້ອງກັນສະມາຊິກຄອບຄົວ ແລະ ເພື່ອນນັກຮຽນຈາກການຕິດເຫົາອີກ.

### ຈະເຮັດຢ່າງໃດກັບບ່ອນນອນ ແລະ ເຄື່ອງນຸ່ງ

ການຄົ້ນຄວ້າໄດ້ແນະນຳວ່າ ຜ້າປູບ່ອນນອນ ໝອກ ເຄື່ອງນຸ່ງ ແລະ ເຄື່ອງເຟີນີເຈີ ຈະບໍ່ຊຸກເຊື້ອງ ຫຼື ສິ່ງຕໍ່ໄຂ່ເຫົາ ຫຼື ໂຕເຫົາ ດັ່ງນັ້ນບໍ່ມີ ປໂຍດຫຍັງທີ່ຈະຊັກລ້າງເຄື່ອງເຫຼົ່ານີ້ ເພື່ອເປັນການກຳຈັດອີກທາງນຶ່ງ. ພວກມັນຈະແຫ້ງຕາຍ ໂດຍໄວຖ້າອອກຈາກຫົວ.

*ຂໍ້ມູນນີ້ແມ່ນຢູ່ບົນພື້ນຖານຂອງຂໍ້ມູນທີ່ມີໄວ້ ໃຫ້ທີ່ເວັບໄຊຕ໌ຂອງ Nitbusters ກົມ ອະນາມັຍ NSW.